ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ06 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 MAY 2015

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 04/2015 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ພົ້ນເດັ່ນແມ່ນ: ❶ສຳເລັດການຈັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ວຽກງານສາຍລັດ ປະຈຳເດືອນ 04/2015; ❷ສຳເລັດການຈັດຕັ້ງປາຖະກະຖາມູນເຊື້ອວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 60 ປີ ໃຫ້ແກ່ສະມາຊິກພັກ-ພະນັກງານ ອ້ອມຂ້າງອົງຄະນະພັກ ທຫລ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໜຶ່ງດຽວພັດທະນາ ແລະ ບໍລິສັດ ບີແອສແຄັບ ປີໂຕລາວ ເຊົ່າສິນເຊື່ອ; ❷ສຳເລັດການມອບໃບອະນຸຍາດຊົ່ວຄາວໃຫ້ແກ່ ບໍລິສັດ ຈີແອວ ເຊົ່າສິນເຊື່ອ (ລາວ) ຈຳກັດ; ❸ສຳເລັດການອອກແຈ້ງການເຖິງທະນາຄານທຸລະກິດ ກ່ຽວກັບເພີ່ມທະວີຄວາມເອົາໃຈໃສ່ ແລະ ລະມັດລະວັງກ່ຽວກັບການໃຫ້ບໍລິການ ຫຼື ດຳເນີນທຸລະກິດກັບບຸກຄົນ ແລະ ນິຕິບຸກຄົນ ທີ່ຢູ່ໃນບັນຊີດຳຂອງອົງການສະຫະປະຊາຊາດ ແລະ ສະຫະລັດອາເມລິກາ; ສຳເລັດການອອກແຈ້ງການເຖິງບັນດາທະນາຄານທຸລະກິດ ເພື່ອສະໜອງຂໍ້ມູນກ່ຽວກັບພັນທະບັດລ້າງໜີ້ຂອງກະຊວງການເງິນ ທີ່ບໍລິສັດນຳໄປດຳເນີນທຸລະກຳກັບ ທະນາຄານທຸລະກິດ ພາຍຫຼັງທີ່ໄດ້ຮັບການອ່າຍໜີ້ຈາກກະຊວງການເງິນຄັ້ງທີໜຶ່ງ, ແຈ້ງການເຖິງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ ແລະ ບໍລິສັດເຊົ່າສິນເຊື່ອຕ່າງໆ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ ໃນການພົວພັນທຸລະກິດກັບທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ທີ່ຕັ້ງຢູ່ປະເທດທີ່ນອນຢູ່ໃນບັນຊີຂອງອົງການຕ້ານການຟອກເງິນສາກົນ (FATF) ກ່ຽວກັບການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT), ແຈ້ງການໃຫ້ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ

ທະນາຄານແຫ່ງ ສປປ ລາວ ເພີ່ມທະວີການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

- ສຳເລັດການຈັດກອງປະຊຸມຕ່າງໆ ທີ່ພົ້ນເດັ່ນ ດັ່ງນີ້: ❶ກອງປະຊຸມປຶກສາຫາລືຄົ້ນຄວ້າຮ່າງນິຕິກຳກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❷ກອງປະຊຸມປຶກສາຫາລື ແລະ ຄົ້ນຄວ້າຮ່າງນິຕິກຳກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບຊ່ຽວຊານທະນາຄານໂລກ ແລະ ອົງການ UNODC; ❸ກອງປະຊຸມເພື່ອຄົ້ນຄວ້າບົດອະທິບາຍຄວາມສອດຄ່ອງທາງດ້ານກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກັບກົດໝາຍທີ່ກ່ຽວຂ້ອງ; ❹ກອງປະຊຸມເຜີຍແຜ່ຮ່າງນິຕິກຳກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໂຮງແຮມລ້ານຊ້າງ; ❺ກອງປະຊຸມສຳມະນາກ່ຽວກັບ ການເພີ່ມຂີດຄວາມສາມາດ ເພື່ອຕິດຕາມ ແລະ ຄວບຄຸມການໄຫຼວຽນຂອງເງິນທຶນ ສຳລັບກິດຈະກຳການກໍ່ການຮ້າຍ; ❻ກອງປະຊຸມປຶກສາຫາລືກ່ຽວກັບວິໄສທັດຂອງ ຄະນະກຳມະການລະດັບສູງຫຼັງປີ 2015 (2015-2025) ຂອງວຽກງານອາຊຽນ ແລະ ປຶກສາຫາລືກ່ຽວກັບການເຂົ້າຫາແຫຼ່ງທຶນຢ່າງທົ່ວເຖິງ; ❼ກອງປະຊຸມປຶກສາຫາລືພາຍໃນ ຕໍ່ກັບສັນຍາການຄ້າຊາຍແດນ ສປປ ລາວ-ສສ ຫວຽດນາມ ແລະ ສັນຍາສົ່ງເສີມ ແລະ ອຳນວຍຄວາມສະດວກທາງດ້ານການຄ້າໃນເຂດສາມຫຼ່ຽມພັດທະນາ ລະຫວ່າງ ສປປ ລາວ-ກຳປູເຈຍ-ສສ. ຫວຽດນາມ;

- ອ່ວຍໜີ້ 3 ແຈ ໂຄງການລົງທຶນຂອງລັດ ຄັ້ງທີ 1 ໄດ້ທັງໝົດ 25 ບໍລິສັດ ມູນຄ່າ 712,80 ຕື້ກີບ ຊຶ່ງປະຕິບັດການອ່ວຍໜີ້ສາມແຈໂຄງການລົງທຶນຂອງລັດ ໃນເດືອນ 4/2015 ຈຳນວນ 7 ບໍລິສັດ ມູນຄ່າ 99,98 ຕື້ກີບ,ໃນນັ້ນ, ທຫລ ຍັງເຫຼືອອີກ 5 ບໍລິສັດ ມູນຄ່າ 128 ຕື້ກີບ;

- ສຳເລັດການຮ່າງລະບຽບຕະຫຼາດລະຫວ່າງທະນາຄານ ແລະ ຮ່າງບົດແນະນຳການຈັດຕັ້ງປະຕິບັດ ລະບຽບວ່າດ້ວຍການດຳເນີນງານໃນຕະຫຼາດເປີດ;

- ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ຈຳນວນ 4 ສະບັບ, ປັດຈຸບັນ STR ມີທັງໝົດ 136 ສະບັບ.

## III. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

ປະເທດເຢຍລະມັນ ໄດ້ວາງເປົ້າໝາຍການຂະຫຍາຍຕົວຂອງເສດຖະກິດ ໃນປີ 2015 ໃນລະດັບ 2,1% ແລະ 1,8% ໃນປີ 2016 ເນື່ອງຈາກການບໍລິໂພກພາຍໃນພາກເອກະຊົນເພີ່ມສູງຂຶ້ນ ບວກກັບຕົວເລກການວ່າງງານຫຼຸດລົງຕ່ຳສຸດເປັນປະຫວັດສາດ. ທະນາຄານກາງ ສປ ຈີນ ປັບຫຼຸດອັດຕາເງິນແຮຝາກບັງຄັບ ຂອງທະນາຄານທຸລະກິດລົງ 1% ຊຶ່ງເປັນການປັບລົງຄັ້ງທີ 2 ໃນປີ 2015 ເພື່ອຊຸກຍູ້ໃຫ້ບັນດາທະນາຄານທຸລະກິດປ່ອຍກູ້ໄດ້ຫຼາຍຂຶ້ນ ພາຍຫຼັງທີ່ເສດຖະກິດ ສປ ຈີນ ຢູ່ໃນພາວະຖອດຖອຍ.

ສະພາບອັດຕາເງິນເຟີ້ສາກົນ ໃນເດືອນ 3/2015 ເຫັນວ່າອັດຕາເງິນເຟີ້ໃນຂົງເຂດເອີຣົບ ເພີ່ມຂຶ້ນ 0,2% ຈາກ -0,3% ມາເປັນ -0,1% ເນື່ອງຈາກລາຄາພະລັງງານ ແລະ ນ້ຳມັນເຊື້ອໄຟຫຼຸດລົງ. ໃນຂະນະທີ່ ອັດຕາການວ່າງງານໃນເດືອນ 2/2015 ຂອງຂົງເຂດເອີຣົບ ຫຼຸດລົງ 0,1% ຈາກລະດັບ 11,4% ມາເປັນ 11,3% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນັ້ນ, ປະເທດເກຣັກມີອັດຕາການວ່າງງານສູງສຸດຢູ່ລະດັບ 26% ແລະ ປະເທດເຢຍລະມັນ ມີອັດຕາການວ່າງງານຕ່ຳສຸດໃນຂົງເຂດເອີຣົບ ຢູ່ໃນລະດັບ 4,8%.

2. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາໃຫ້ໄດ້ຕາມຄາດໝາຍທີ່ກໍານົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດ ລຸ່ມນີ້:

- ຖານເງິນຕາປະຈໍາເດືອນ 4/2015 ເພີ່ມຂຶ້ນ 317,58 ຕື້ກີບ ຫຼື 1,18% ທຽບໃສ່ເດືອນ 3/2015. ສາເຫດຕົ້ນຕໍຍ້ອນທະນາຄານທຸລະກິດຮັບເງິນໂອນຈາກຕ່າງປະເທດ ສຸດທິ 148 ລ້ານໂດລາ ແລະ ທຫລ ປ່ອຍສິນເຊື່ອໃຫ້ໂຄງການບູລິມະສິດຂອງລັດຖະບານ 40 ລ້ານໂດລາ ແລະ ລັດຖະບານເບີກເງິນເດືອນໃຫ້ ປກຊ ແລະ ປກສ 257 ຕື້ກີບ, ເຖິງແມ່ນວ່າ ທທກ ຖອນເງິນສົດ ສຸດທິ 93 ລ້ານໂດລາ ແລະ ລັດຖະບານຊໍາລະເງິນລ່ວງໜ້າໃຫ້ ທຫລ 700 ຕື້ກີບ ແຕ່ປະລິມານເງິນ M2 ເພີ່ມຂຶ້ນ 750,96 ຕື້ກີບ ຫຼື 1,35% ທຽບໃສ່ເດືອນ 3/2015, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.932,54 ຕື້ກີບ ຫຼື 21,45%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 4/2015 ທຽບໃສ່ເດືອນ 3/2015 ເຫັນວ່າສືບຕໍ່ມີສະເຖຍລະພາບ ເຫັນໄດ້ຈາກເງິນກີບອ່ອນຄ່າ 0,01% ສໍາລັບເງິນກີບທຽບໂດລາ ແລະ ອ່ອນຄ່າ 0,01% ສໍາລັບເງິນກີບທຽບບາດ. ສ່ວນຕ່າງລະຫວ່າງອັດຕາ ທທກ ກັບ ອັດຕາຕະຫຼາດ ຫຍັບເຂົ້າຫາກັນທັງສອງສະກຸນເງິນ ຄື: ຈາກ 0,17% ມາເປັນ 0,14% ສໍາລັບເງິນກີບທຽບໂດລາ ແລະ ຈາກ 0,03% ມາເປັນ 0,004% ສໍາລັບເງິນກີບທຽບບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,40% ທຽບກັບເງິນໂດລາ ແລະ ອ່ອນຄ່າ 1,31% ທຽບເງິນບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

- ອັດຕາເງິນເຟີ້ປະຈໍາເດືອນ 04/2015 ຕົວເລກເບື້ອງຕົ້ນຢູ່ໃນລະດັບ 1,15% ຫຼຸດລົງ 0,02% ຈາກ 1,17% ໃນເດືອນ 03/2015 ຜ່ານມາ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ທທກ ໃນເດືອນ 4/2015 ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 35,99% ເນື່ອງຈາກປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາເພີ່ມຂຶ້ນ. ຄວາມຕ້ອງການຫຼາຍກວ່າການຕອບສະໜອງ ຊຶ່ງເຫັນໄດ້ຈາກ ທທກ ຂາຍສຸດທິ 40,21 ລ້ານໂດລາທຽບເທົ່າ, ໃນນັ້ນ ຊື້ໂດລາສຸດທິ 76,55 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 3.764,52 ລ້ານບາດ ຫຼື 116,76 ລ້ານໂດລາທຽບເທົ່າ. ທຫລ ຂາຍສຸດທິ 52,72 ລ້ານໂດລາທຽບເທົ່າ, ໃນນັ້ນຂາຍໂດລາສຸດທິ 33,90 ລ້ານໂດລາ ແລະ ຂາຍເງິນບາດສຸດທິ 606,70 ລ້ານບາດ ຫຼື ທຽບເທົ່າ 18,82 ລ້ານໂດລາທຽບເທົ່າ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດເດືອນ 04/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 47.396,05 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,02%.ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,00% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 51,29% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ 1,04%, ຊຶ່ງກວມເອົາ 48,71% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດເດືອນ 04/2015 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 42.421,80 ຕື້ກີບ ເພີ່ມຂຶ້ນ 1,64% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,78% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາ ກວມເອົາ 50,22% ຂອງສິນເຊື່ອທັງໝົດ.

ໃນເດືອນ 04/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 5,17 ຕື້ກີບ ເທົ່າກັບ 6,4% ຂອງແຜນການ ຫຼຸດລົງ 55,2% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈໍານວນ 3,46 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈໍານວນ 1,46 ຕື້

ກີບ, ສິນເຊື່ອ 3 ສ້າງ ຈຳນວນ 70 ລ້ານກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງ ການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 04/2015 ມີຈຳນວນ 2.250,98 ຕື້ກີບ ຫຼຸດລົງ 1,8% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້ ໜີ້ປົກກະຕິ ກວມເອົາ 68,9% ແລະ ໜີ້ຕົ້ນທຶນຄົບກຳນົດສັນຍາຊຳລະ ກວມເອົາ 31% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 03/2015 ມີ ຈຳນວນ 2.888,87 ຕື້ກີບ (ຕົວເລກເບື້ອງຕົ້ນ) ຫຼຸດລົງ 5,23% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5,25% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນເມື່ອທຽບໃສ່ເດືອນຜ່ານມາ ຍ້ອນທະນາຄານພັດທະນາລາວ, ທະນາຄານເອສທີ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

## 4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

### 4.1. <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 2.772 ສະບັບ ເພີ່ມຂຶ້ນ 9,67% ເປັນເງິນຈຳນວນ 2.109,60 ຕື້ກີບ ຫຼຸດລົງ 10,72% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 150 ຄັ້ງ ມີມູນຄ່າການໂອນ 615,76 ຕື້ກີບ ເພີ່ມຂຶ້ນ 24,62% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 28/03-27/04/2015 ມີການເຄື່ອນໄຫວຈຳນວນ 5,052 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 4.987 ຄັ້ງ ມີມູນຄ່າການໂອນ 1.555,68 ຕື້ກີບ ເພີ່ມຂຶ້ນ 55,14% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 1.460 ຄັ້ງ ຈາກທັງໝົດ 32 ທະນາຄານ;
- **ສະກຸນເງິນໂດລາ:** ມີການເຄື່ອນໄຫວ 1 ຄັ້ງ ມີມູນຄ່າການໂອນ 76.500 ໂດລາສະຫະລັດ;
- **ສະກຸນເງິນບາດ:** ມີການເຄື່ອນໄຫວ 1 ຄັ້ງ ມີມູນຄ່າການໂອນ 550.000 ບາດ;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 63 ຄັ້ງ ມີມູນຄ່າ 639,77 ຕື້ກີບ.

### 3.2 <u>ການຊື້-ຂາຍພັນທະບັດ</u>

ໃນເດືອນ 04/2015 ພັນທະບັດກະຊວງການເງິນ ມີການຈຳໜ່າຍທັງໝົດ ຈຳນວນ 380 ຕື້ກີບ. ໃນນັ້ນ, ຈຳໜ່າຍພັນທະບັດບ້ວງລະດົມທຶນໃຫ້ ທະນາຄານທຸລະກິດ ຈຳນວນ 300 ຕື້ກີບ ແລະ ພັນທະບັດລະດົມທຶນ ຂາຍຜ່ານ ທຫລ ຈຳນວນ 80 ຕື້ກີບ. ພາຍໃນເດືອນນີ້ມີການໄຖ່ຖອນພັນທະບັດ ຈຳນວນ 403 ຕື້ກີບ. ໃນນັ້ນ, ໄຖ່ຖອນພັນທະບັດບ້ວງລ້າງໜີ້ໃຫ້ຫົວໜ່ວຍທຸລະກິດ ຈຳນວນ 4 ຕື້ກີບ, ໄຖ່ຖອນບ້ວງລະດົມທຶນຈາກທະນາຄານທຸລະກິດ ຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 70 ຕື້ກີບ ແລະ ບ້ວງລະດົມທຶນທະນາຄານທຸລະກິດໂດຍກົງ ຈຳນວນ 329 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 4 ບ້ວງ ຊຶ່ງມີຍອດເຫຼືອ 6.049,40 ຕື້ກີບ ແລະ 90 ລ້ານໂດລາ.

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 04/2015 ມີການໄຖ່ຖອນພັນທະບັດ ທຫລ ຈຳນວນ 1,50 ລ້ານໂດລາ ແລະ ຈ່າຍດອກເບ້ຍ ຈຳນວນ 0,05 ລ້ານໂດລາ, ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 154 ລ້ານໂດລາ.

---

[1] ເດືອນ 4/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງບໍ່ຄົບຖ້ວນ;

5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.466,36 ຈຸດ ເພີ່ມຂຶ້ນ 1,59% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 2,77 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 20,36 ຕື້ກີບ ເພີ່ມຂຶ້ນ 173,82% ທຽບໃສ່ເດືອນຜ່ານມາ. ໃນເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 63,50% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.929 ກີບ ຫຼຸດລົງ 204 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ ມີປະລິມານຊື້-ຂາຍທັງໝົດ 200.834 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,39 ຕື້ກີບ ຫຼຸດລົງ 33,43% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 45,84% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,59%[2].
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.466 ກີບ ເພີ່ມຂຶ້ນ 301 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2,51 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,75 ຕື້ກີບ ເພີ່ມຂຶ້ນ 294,58% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 66,46% ຂອງມູນຄ່າຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].
- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.307 ກີບ ຫຼຸດລົງ 650 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 430 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 4 ລ້ານກີບ ຫຼຸດລົງ 71,29% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.822 ກີບ ຫຼຸດລົງ 156 ກີບ ເມື່ອທຽບໃສ່ປີທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 58.729 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 224,46 ລ້ານກີບ ຫຼຸດລົງ 61,50% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 16,87% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

## IV. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

ການສຶກສາອົບຮົມທາງດ້ານການເມືອງ-ແນວຄິດໃຫ້ແກ່ພະນັກງານ ເຖິງແມ່ນວ່າຈະໄດ້ມີການເຜີຍແຜ່ເອກະສານສຳຄັນ ໃນແຕ່ລະໄລຍະຢ່າງເປັນປົກກະຕິ ແຕ່ການຄົ້ນຄວ້າເຊື່ອມຊຶມເອກະສານ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ ເຮັດໃຫ້ພະນັກງານຈຳນວນໜຶ່ງຍັງບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານເທົ່າທີ່ຄວນ. ການແກ້ໄຂວຽກງານບາງຄັ້ງຍັງມີລັກຊະນະຊັກຊ້າ ເນື່ອງຈາກແບບແຜນວິທີເຮັດວຽກຍັງບໍ່ທັນຄ່ອງຕົວ ບວກກັບຕ້ອງໄດ້ປະຕິບັດວຽກງານອື່ນທີ່ຮີບດ່ວນກ່ອນ. ສະມາຊິກສາມອົງການຈັດຕັ້ງຈຳນວນໜຶ່ງ ຍັງຂາດຄວາມເປັນເຈົ້າການໃນການເຂົ້າຮ່ວມຂະບວນການຕ່າງໆ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານເປັນປົກກະຕິ. ປຸກລະດົມພະນັກງານໃຫ້ມີຄວາມກະຕືລືລົ້ນ ມີຄວາມຮັບຜິດຊອບສູງ. ຊຸກຍູ້ພະນັກງານໃຫ້ມີຄວາມເອົາໃຈໃສ່ຮຽນຮູ້ປະສົບການຕ່າງໆ ດ້ານວຽກງານວິຊາສະເພາະໃຫ້ມີຄວາມໜັກແໜ້ນກວ້າງຂວາງ

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ກວ່າເກົ່າ. ສູ້ຊົນເສີມຂະຫຍາຍດ້ານດີ ປັບປຸງແກ້ໄຂຂໍ້ຄົງຄ້າງດ້ານຕ່າງໆ ໃຫ້ຕິດຖອຍເທື່ອລະກ້າວ. ເອົາໃຈໃສ່ປຸກລະດົມຊຸກຊວນພະນັກງານ ໃຫ້ເຂົ້າຮ່ວມວຽກງານຂະບວນການຕ່າງໆຢ່າງເປັນຂະບວນຟົດຟື້ນ.

## ພາກທີII

## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດ ຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ແຜນປະຕິບັດວຽກງານຈຸດສຸມໃນຕໍ່ໜ້າ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ.

- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;

- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ❷ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການ Basel II ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ດ້ວຍຫຼັກການ Basel II; ❸ຕິດຕາມຮ່າງຂໍ້ຕົກລົງ ເປັນຕົ້ນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ, ເອກະສານສະເໜີຂໍສ້າງຕັ້ງ ທຫລ ສາຂາຊຽງຂວາງ ທີ່ໄດ້ສົ່ງໃຫ້ກະຊວງພາຍໃນ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການຂາຍຫຼັກຊັບທີ່ໄດ້ຮັບຈາກການຊຳລະໜີ້ ຂອງທະນາຄານທຸລະກິດ (ຊຳລະສະສາງຫຼັກຊັບຄ້ຳປະ

ກັນ), ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄຳແນະນຳເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສຳລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❹ສືບຕໍ່ຄົ້ນຄວ້າປັບປຸງພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ; ❺ສືບຕໍ່ຄົ້ນຄວ້າ ແລະ ປັບປຸງຮ່າງລະບຽບການວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນ ຂອງຜູ້ລົງທຶນຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບຢູ່ໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນຕ່າງປະເທດ; ສືບຕໍ່ຄົ້ນຄວ້າຮ່າງລະບຽບກ່ຽວກັບລະບຽບວ່າດ້ວຍປະກັນໄພການເງິນຈຸລະພາກ; ສືບຕໍ່ຮ່າງລະບຽບກ່ຽວກັບການຢຶດ ແລະ ອາຍັດຊັບທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍມາດຕາ 38, 39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

- ກະກຽມລົງກວດບັນດາສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ພາຍໃນນະຄອນຫຼວງວຽງຈັນ ປະຈຳປີ 2014;
- ກະກຽມເຂົ້າຮ່ວມກອງປະຊຸມແບບຊຶ່ງໜ້າ (Face to Face Meeting) ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ Action Plan ຂອງວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ທີ່ປະເທດອິນໂດເນເຊຍ;
- ສືບຕໍ່ປະສານ ແລະ ຕິດຕາມກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການຂໍຄວາມຊ່ວຍເຫຼືອດ້ານວິຊາການ ເພື່ອຫັນການຄຸ້ມຄອງທະນາຄານທຸລະກິດ ຕາມຫຼັກການ Basel II;
- ສືບຕໍ່ປັບປຸງການບັນທຶກບັນຊີ ກ່ຽວກັບເຄື່ອງມືພັນທຸກຳທາງການເງິນ "**Currency Option, Interest Rate Swaps**", ປຶ້ມແນະນຳເພີ່ມເຕີມການບັນທຶກບັນຊີ ສັນຍາຊື້-ຂາຍເງິນຕາຕ່າງປະເທດລ່ວງໜ້າ (**Forward Contract**) ຂອງທະນາຄານກາງ ແລະ ທະນາຄານທຸລະກິດ;
- ສືບຕໍ່ຈຳໜ່າຍພັນທະບັດຂອງກະຊວງການເງິນຄັ້ງທີ 4 ບ້ວງ 1.000 ຕື້ກີບ ຂາຍຜ່ານ ທຫລ ໃນສົກປີ 2014-2015 ທີ່ຍັງເຫຼືອ ຈຳນວນ 96 ຕື້ກີບ;
- ສືບຕໍ່ສະໜອງຂໍ້ມູນໃຫ້ແກ່ອົງການກວດສອບແຫ່ງລັດ ທີ່ລົງກວດ ທຫລ.
- ສືບຕໍ່ລາຍງານທຸລະກຳທີ່ມີລັກຊະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**

# <u>ຕາຕະລາງຄັດຕິດບົດລາຍງານ</u>

## ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 03/2015 | | | ເດືອນນີ້ 04/2015 | | | %(+)ເງິນກີບແຂງ/(-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8,093.11 | 8,123.75 | 8,109.19 | 8,093.41 | 8,124.30 | 8,110.81 | -0.004% | -0.01% | -0.02% |
| ບາດ | 250.45 | 251.52 | 251.06 | 250.42 | 251.53 | 251.05 | 0.01% | -0.003% | 0.004% |
| +ນອກລະບົບ | | | | | | | | | |
| ໂດລາ | 8,106.43 | 8,140.15 | 8,123.29 | 8,108.52 | 8,136.57 | 8,122.54 | -0.03% | 0.04% | 0.01% |
| ບາດ | 250.44 | 251.53 | 250.99 | 250.41 | 251.66 | 251.04 | 0.01% | -0.05% | -0.02% |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0.16% | 0.20% | 0.17% | 0.19% | 0.15% | 0.14% | | | |
| -ບາດ | -0.002% | 0.001% | -0.03% | -0.003% | 0.05% | -0.004% | | | |

## ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 03/2015 | | ເດືອນ 04/2015 | | | (%) +ເພີ່ມຂຶ້ນ/-ຫລຸດລົງ | |
|---|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ທຽບເທົ່າໂດລາ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | | |
| - ທ/ຄ ທຸລະກິດລັດ | 65.41 | 918.72 | 85.98 | 1,035.94 | 118.11 | 31.45% | 12.76% |
| - ທ/ຄ ທຸລະກິດອື່ນໆ | 105.35 | 688.95 | 168.29 | 624.84 | 187.67 | 59.74% | -9.31% |
| ລວມຊື້: | **170.76** | **1,607.67** | **254.27** | **1,660.78** | **305.78** | **48.90%** | **3.30%** |
| 2. ການຂາຍເງິນຕາຕ່າງປະເທດ | | | | | | | |
| - ທ/ຄທຸລະກິດລັດ | 78.05 | 736.54 | 85.57 | 875.00 | 112.71 | 9.63% | 18.80% |
| - ທ/ຄທຸລະກິດອື່ນໆ | 76.08 | 2,633.06 | 92.15 | 4,550.30 | 233.28 | 21.13% | 72.81% |
| ລວມຂາຍ: | **154.13** | **3,369.60** | **177.73** | **5,425.30** | **345.99** | **15.31%** | **61.01%** |
| ທທກ ຊື້-ຂາຍສຸດທິ | **16.63** | **-1,761.93** | **76.55** | **-3,764.52** | **-40.21** | **360.18%** | **113.66%** |
| % ຜິດດ່ຽງຊື້-ຂາຍ | 9.74 | -109.60 | 30.10 | -226.67 | -13.15 | 203.31% | -117.57% |
| ມູນຄ່າການຊື້-ຂາຍ | **324.89** | **4,977.26** | **432.00** | **7,086.08** | **651.78** | **32.97%** | **42.37%** |
| 3. ຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | | | | | | | |
| - ທຫລ ຊື້ຈາກ ທທກ | 51.30 | 292.56 | 20.00 | 441.80 | 33.70 | -61.01% | 51.01% |
| - ທຫລ ຂາຍໃຫ້ ທທກ | 21.50 | 282.00 | 53.90 | 1,048.50 | 86.42 | 150.71% | 271.81% |
| ທຫລ ຊື້-ຂາຍສຸດທິ | **29.80** | **10.56** | **-33.90** | **-606.70** | **-52.72** | **-213.76%** | **-584.99%** |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **39.45** | **836.59** | **48.42** | **1,282.95** | **88.21** | **22.73%** | **53.36%** |
| 5. ຊື້-ຂາຍ ລະຫວ່າງ ທຫລ ກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | | |
| - ທຫລ ຊື້ຈາກພາກສ່ວນອື່ນ | 16.08 | 1,873.79 | 181.57 | 4,892.87 | 333.33 | 102.02% | 161.12% |
| - ທຫລ ຂາຍໃຫ້ພາກສ່ວນອື່ນ | 57.48 | 60.97 | 149.63 | 0.06 | 149.63 | 160.29% | -99.90% |
| ທຫລ ຊື້-ຂາຍສຸດທິ | **-41.40** | **1,812.81** | **31.95** | **4,892.81** | **183.70** | **-177.16%** | **169.90%** |